ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0108 /ກປ.2005

ນະຄອນຫຼວງວຽງຈັນ, ວັນທີ 20 APR 2005

# ຂໍ້ຕົກລົງ

## ຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍລະບຽບການສຳຫຼວດປ່າໄມ້

- ອີງຕາມ ກົດໝາຍປ່າໄມ້ ສະບັບເລກທີ 01-96, ລົງວັນທີ 11 ຕຸລາ 1996.
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 59/ນຍ, ລົງວັນທີ 22 ພຶດສະພາ 2002 ວ່າດ້ວຍ ການຄຸ້ມຄອງປ່າຜະລິດ ແບບຍືນນານ.
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບ ເລກທີ່ 89/ນຍ, ລົງວັນທີ່ 22 ມິຖຸນາ 1999 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້.

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

1. ກຳນົດ ຫຼັກການ ແລະ ມາດຕະຖານ ການສຳຫຼວດປ່າໄມ້ ເພື່ອເປັນບ່ອນອີງ ໃຫ້ແກ່ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ແບບຍືນນານ.
2. ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ການສຳຫຼວດປ່າໄມ້ ໃນຂອບເຂດທົ່ວປະເທດ.

**ມາດຕາ 2. ນິຍາມ**

1. <u>ການສຳຫຼວດຄວາມປົກຫຸ້ມປ່າໄມ້:</u> ແມ່ນການປະເມີນ ຄວາມປົກຫຸ້ມ ຂອງປ່າໄມ້ ແລະ ເນື້ອທີ່ປ່າໄມ້ ໃນໄລຍະເວລາໃດໜຶ່ງ ໃນລະດັບເຂດ ຫຼື ລະດັບຊາດ ເພື່ອສຶກ ສາການປ່ຽນແປງສະພາບປ່າໄມ້ ໂດຍນຳໃຊ້ ຂໍ້ມູນຈາກພາບຖ່າຍທາງອາກາດ ຫຼື ພາບຖ່າຍດາວທຽມ ເປັນຕົ້ນຕໍ.

2. <u>ການສຳຫຼວດປ່າໄມ້ແຫ່ງຊາດ</u>: ແມ່ນການປະເມີນ ເນື້ອທີ່ປ່າໄມ້, ບໍລິມາດໄມ້ ແລະ ເຄື່ອງປ່າຂອງດົງ ໃນທົ່ວປະເທດ ໂດຍສຸ່ມຕົວຢ່າງ ໃນພາກສະໜາມເປັນຕົ້ນຕໍ ແລະ ນຳໃຊ້ຂໍ້ມູນຈາກພາບຖ່າຍທາງອາກາດ ຫຼື ພາບຖ່າຍດາວທຽມ.
3. <u>ການສຳຫຼວດກຳນົດເຂດປ່າຜະລິດ:</u> ແມ່ນການກຳນົດພື້ນທີ່ ປ່າໄມ້ ແລະ ທີ່ດິນປ່າ ໄມ້ ທີ່ມີເງື່ອນໄຂຕອບສະໜອງໄມ້ ແລະ ຜະລິດຕະພັນປ່າໄມ້ ສຳລັບເປົ້າໝາຍ ໃນ ການຜະລິດໃນປະຈຸ ບັນ ແລະ ໃນອານາຄົດ.
4. <u>ການສຳຫຼວດຈັດສັນປ່າຜະລິດ</u>: ແມ່ນການເກັບກຳຂໍ້ມູນກ່ຽວກັບ ເນື້ອທີ່ການນຳໃຊ້ທີ່ດິນ, ບໍລິມາດໄມ້, ຊະນິດພັນໄມ້, ເຄື່ອງປ່າຂອງດົງ ແລະ ຂໍ້ມູນເສດຖະກິດ-ສັງ ຄົມ ໃນເຂດປ່າຜະລິດ ເພື່ອວາງແຜນຈັດສັນ, ຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ ແບບຍືນນານ.
5. <u>ການສຳຫຼວດກ່ອນການຂຸດຄົ້ນ:</u> ແມ່ນການຂຶ້ນບັນຊີຊະນິດພັນໄມ້, ຈຸດທີ່ຕັ້ງຂອງ ຕົ້ນໄມ້ທັງໝົດ ຕາມຂະໜາດວັດຮອບອະນຸຍາດຕັດປໍ້າ ທີ່ໄດ້ລະບຸໄວ້ ໃນຂໍ້ກຳນົດ ຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ກຳນົດເສັ້ນທາງລາກແກ່ ເພື່ອສ້າງແຜນ ການຂຸດຄົ້ນໄມ້.
6. <u>ການສຳຫຼວດໝາຍຕົ້ນຕັດ</u>: ແມ່ນການໝາຍເບີຕົ້ນໄມ້ທີ່ຈະຖືກຕັດດ້ວຍນ້ຳສີ ແລະ ການຕີກາຕົ້ນ.
7. <u>ການສຳຫຼວດຫຼັງການຂຸດຄົ້ນ</u>: ແມ່ນການກວດກາຜົນການຈັດຕັ້ງປະຕິບັດແຜນຈັດ ສັນ ແລະ ແຜນການຂຸດຄົ້ນເພື່ອປະເມີນ ຜົນກະທົບຕໍ່ສະພາບປ່າໄມ້ ແລະ ສິ່ງແວດລ້ອມ ພ້ອມທັງກຳນົດມາດຕະການແກ້ໄຂ.
8. <u>ຮອບວຽນການຂຸດຄົ້ນ:</u> ແມ່ນວົງຈອນການຂຸດຄົ້ນໄມ້ ແບບຍືນນານ ໃນເຂດປ່າຜະລິດ ຊຶ່ງໄດ້ກຳນົດໃນແຜນຈັດສັນ.
9. <u>ປ່າຕຶບໜາສູງ:</u> ແມ່ນເຂດປ່າໄມ້ ທີ່ມີລະດັບຄວາມປົກຫຸ້ມ ຂອງເຮືອນຍອດ ແຕ່ 70% ຂອງເນື້ອທີ່ ຂຶ້ນໄປ.
10. <u>ປ່າຕຶບໜາປານກາງ:</u> ແມ່ນເຂດປ່າໄມ້ ທີ່ມີລະດັບຄວາມປົກຫຸ້ມ ຂອງເຮືອນຍອດ ແຕ່ 40% ຫາ 69% ຂອງເນື້ອທີ່.
11. <u>ການສຳຫຼວດປ່າສະຫງວນ:</u> ແມ່ນການເກັບກຳຂໍ້ມູນກ່ຽວກັບເນື້ອທີ່ການນຳໃຊ້ທີ່ດິນ, ຊີວະນາໆພັນ, ຮ່ອງຮອຍ ປະຫວັດສາດ, ວັດທະນາທຳ, ເສດຖະກິດ-ສັງຄົມ ເພື່ອວາງແຜນຈັດສັນ, ຄຸ້ມຄອງ, ນຳໃຊ້ ແລະ ປົກປັກຮັກສາ.
12. <u>ການສຸ່ມຕົວຢ່າງ:</u> ແມ່ນການຄັດເລືອກເນື້ອທີ່ຈຳນວນໜຶ່ງ ທີ່ເປັນຕົວແທນໃຫ້ແກ່ ເນື້ອທີ່ທັງໝົດ.
13. <u>ດອນຕົວຢ່າງ:</u> ແມ່ນເນື້ອທີ່ໆເປັນຕົວແທນໃຫ້ແກ່ເນື້ອທີ່ໃດໜຶ່ງ ຊຶ່ງໄດ້ກຳນົດຂະ ໜາດໄວ້ສຳລັບເກັບກຳຂໍ້ມູນ.
14. <u>ການເຕີບໂຕຂອງຕົ້ນໄມ້:</u> ແມ່ນການຂະຫຍາຍໂຕຂອງຕົ້ນໄມ້ ວັດແທກເປັນ ແມັດກ້ອນຕໍ່ເຮັກຕາ ຕໍ່ປີ (ມ$^3$/ຮຕ/ປີ).

ມາດຕາ 7. ມາດຕະຖານການກຳນົດເຂດປ່າຜະລິດ

1. ເຂດປ່າຜະລິດ ຕ້ອງມີເນື້ອທີ່ລວມຕ່ຳສຸດ 5 000 ເຮັກຕາ, ໃນກໍລະນີ ມີເຂດທີ່ ນ້ອຍກວ່ານັ້ນ ແຕ່ມີເນື້ອທີ່ ແຕ່ 500 ເຮັກຕາ ຂຶ້ນໄປ ທີ່ຢູ່ໄກ້ຄຽງ ຊຶ່ງສາມາດຈັດສັນໄດ້ ຄວນເອົາ ເຂດດັ່ງກ່າວ ເຂົ້າເປັນເຂດປ່າຜະລິດ ອັນດຽວກັນ.
2. ເຂດປ່າຜະລິດ ຈະບໍ່ກວມເອົາ ປ່າສະຫງວນແຫ່ງຊາດ, ປ່າປ້ອງກັນລະດັບຊາດ, ເຂດທີ່ກຳ ນົດ ເພື່ອເປັນ ເຂດປ້ອງກັນຊາດ, ເຂດກໍ່ສ້າງພື້ນ ຖານໂຄງລ່າງ ທີ່ເປັນ ເນື້ອທີ່ກວ້າງໃຫ່ຍ ເປັນຕົ້ນ ແມ່ນ ອ່າງເກັບນ້ຳ ແລະ ເຂດທີ່ກຳນົດ ເປັນເຂດ ກໍ່ສ້າງ ໂຄງລ່າງອື່ນໆ ຫຼື ເຂດພັດທະນາການ ກະສິກຳ.
3. ເຂດປ່າຜະລິດຕ້ອງ ມີເຂດແດນ ທີ່ສາມາດກຳນົດໄດ້ ຢ່າງລະອຽດ ເປັນຕົ້ນແມ່ນ ສັນພູ, ສາຍ ນ້ຳ, ເສັ້ນທາງ ແລະ ອື່ນໆ. ຫ່າງຈາກຊາຍແດນລະຫວ່າງຊາດ ຢ່າງໜ້ອຍ 5 ກິໂລ ແມັດ. ຢ່າງໃດ ກໍ່ຕາມ ຂອບເຂດດັ່ງກ່າວ ອາດຈະມີການດັດປັບໄດ້ ໃນເວລາ ຈັດຕັ້ງ ປະຕິບັດຕົວຈິງ ເພື່ອໃຫ້ ແທດເໝາະ ກັບສະພາບຄວາມເປັນຈິງ ຂອງພື້ນທີ່.
4. ເຂດປ່າຜະລິດແມ່ນ ເຂດທີ່ສາມາດຂຸດຄົ້ນໄມ້ໄດ້ ໃນປະຈຸບັນຢ່າງໜ້ອຍ 20%, ແຕ່ ໃນອານາ ຄົດ ຕ້ອງມີຢ່າງໜ້ອຍ 60 % ຂອງເນື້ອທີ່ລວມ. ສ່ວນເນື້ອທີ່ໆຍັງເຫຼືອນັ້ນ ອາດຈະກວມເອົາເນື້ອ ທີ່ປະເພດການນຳໃຊ້ທີ່ດິນ ແລະ ປ່າໄມ້ ອື່ນໆຊຶ່ງມີເນື້ອທີ່ນ້ອຍ ເຊັ່ນ: ປ່າປ້ອງກັນ, ປ່າສະ ຫງວນ, ປ່າຊົມໃຊ້ຂອງບ້ານ, ທົ່ງນາ, ໜອງນ້ຳ, ເຂດທີ່ຢູ່ອາ ໄສ, ພື້ນທີ່ໆມີຄວາມຄ້ອຍຊັນ ສູງ ກວ່າ 33 ອົງສາ ຫຼື 60% .

ມາດຕາ 8. ການສຳຫຼວດ ແລະ ວາງແຜນຈັດສັນປ່າຜະລິດ

8.1 ຫຼັກການລວມໃນການສຳຫຼວດຈັດສັນປ່າຜະລິດ

- ຈັດແບ່ງຄຸ້ມຕາມສະພາບປ່າ ຫຼື ສະພາບພື້ນທີ່ ແລະ ກຳນົດຂະໜາດຂອງຄຸ້ມ.
- ສຸມຕົວຢ່າງໃນລະດັບຄວາມໜາແໜ້ນ ລະຫ່ວາງ 1% ຫາ 5% ຂອງເນື້ອທີ່ປ່າໄມ້ ໃນເຂດປ່າ ຜະລິດ.
- ຄຸ້ມ ແລະ ຕາໜ່າງການສຳຫຼວດ ຕ້ອງສະແດງໃຫ້ເຫັນໃນແຜນທີ່ ແລະ ໃນພາກສະໜາມ.
- ເກັບກຳຂໍ້ມູນກ່ຽວກັບເນື້ອທີ່ປ່າໄມ້, ຊະນິດພັນໄມ້, ຂະໜາດໜ້າຕ້າງ 1,30 ມ ແຕ່ 20 ຊມ ຂຶ້ນ ໄປ, ລວງສູງ, ຕີລາຄາຄຸນນະພາບລຳຕົ້ນ, ໄມ້ສືບພັນ, ຫວາຍ, ໄມ້ປ່ອງ, ເຄື່ອງປ່າຂອງດົງ, ສະພາບພື້ນທີ່, ຕົວຢ່າງດິນ ແລະ ເສດຖະກິດ-ສັງຄົມ.
- ພາຍຫຼັງ ສິ້ນສຸດຮອບວຽນ ຂອງການຂຸດຄົ້ນ ຕ້ອງສຳຫຼວດຄືນ ເນື້ອທີ່ປ່າໄມ້ ທີ່ມີບໍລິມາດຕ່ຳ ຊຶ່ງ ບໍ່ສາມາດຂຸດຄົ້ນ ໃນຮອບວຽນທຳອິດ ເພື່ອປັບປຸງແຜນຈັດສັນ.

8.2 ຫຼັກການລວມໃນການວາງແຜນ ຈັດສັນປ່າຜະລິດ

8.2.1 ແຜນຈັດສັນປ່າຜະລິດ

- ແຜນຈັດສັນລວມທົ່ວເຂດປ່າຜະລິດ;

## ໝວດທີ 2

## ຫຼັກການລວມກ່ຽວກັບການສຳຫຼວດປ່າໄມ້.

ມາດຕາ 3. ປະເພດການສຳຫຼວດປ່າໄມ້.

1. ການສຳຫຼວດຄວາມປົກຫຸ້ມປ່າໄມ້.
2. ການສຳຫຼວດປ່າໄມ້ແຫ່ງຊາດ.
3. ການສຳຫຼວດປ່າຜະລິດ.
   - ສຳຫຼວດກຳນົດເຂດປ່າຜະລິດ.
   - ສຳຫຼວດຈັດສັນປ່າຜະລິດ.
   - ສຳຫຼວດກ່ອນການຂຸດຄົ້ນ.
   - ສຳຫຼວດໝາຍຕົ້ນຕັດ.
   - ສຳຫຼວດຫຼັງການຂຸດຄົ້ນ.
4. ການສຳຫຼວດປ່າສະຫງວນ.

ມາດຕາ 4. ຫຼັກການລວມໃນການສຳຫຼວດຄວາມປົກຫຸ້ມປ່າໄມ້

- ການສຳຫຼວດຄວາມປົກຫຸ້ມປ່າໄມ້ ຕ້ອງດຳເນີນ ໃນທຸກໆ 5 ຫຼື 10 ປີ ແນໃສ່ຕີລາຄາ ທ່າອ່ຽງລວມ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ ເພື່ອເປັນພື້ນຖານໃນການປັບປຸງແຜນຍຸດທະສາດ ການພັດທະນາປ່າໄມ້ ແຕ່ລະໄລຍະ.

ມາດຕາ 5. ຫຼັກການລວມໃນການສຳຫຼວດປ່າໄມ້ແຫ່ງຊາດ

- ການສຳຫຼວດປ່າໄມ້ແຫ່ງຊາດ ຕ້ອງດຳເນີນ ແຕ່ລະ 5 ປີ ຫຼື 10 ປີ.
- ສຸມຕົວຢ່າງລະຫວ່າງ 0.1 ຫາ 0.5 ສ່ວນຮ້ອຍ ຂອງເນື້ອທີ່ປ່າໄມ້ທົ່ວປະເທດ.
- ເກັບກຳຂໍ້ມູນເນື້ອທີ່ການນຳໃຊ້ທີ່ດິນ, ສະພາບພື້ນທີ່, ຊະນິດພັນໄມ້, ບໍລິມາດໄມ້, ໄມ້ສືບພັນ, ຕໍໄມ້ ແລະ ເຄື່ອງປ່າຂອງດົງ.

ມາດຕາ 6. ຫຼັກການລວມກ່ຽວກັບການສຳຫຼວດປ່າສະຫງວນແຫ່ງຊາດ

- ສຳຫຼວດຂອບເຂດ, ປັກຫຼັກໝາຍ ແລະ ຕິດປ້າຍປ່າສະຫງວນແຫ່ງຊາດ.
- ປະເມີນຄວາມປົກຫຸ້ມປ່າໄມ້ໃນເຂດປ່າສະຫງວນແຫ່ງຊາດໃນແຕ່ລະ 10 ປີ.
- ສຸມຕົວຢ່າງລະຫວ່າງ 0.5 ຫາ 1% ຂອງເນື້ອທີ່ປ່າສະຫງວນແຕ່ລະເຂດ ເພື່ອ ເກັບກຳຂໍ້ມູນເນື້ອທີ່ການນຳໃຊ້ທີ່ດິນ, ສະພາບພື້ນທີ່, ຊະນິດພັນໄມ້, ບໍລິມາດໄມ້, ໄມ້ສືບພັນ ແລະ ເຄື່ອງປ່າຂອງດົງ.
- ສຳຫຼວດ ຮ່ອງຮອຍປະຫວັດສາດ, ວັດທະນາທຳ ແລະ ເສດຖະກິດ-ສັງຄົມ.
  ສຳຫຼວດຖິ່ນຢູ່ອາໄສ, ຊະນິດພັນ ສັດປ່າ ແລະ ສັດນ້ຳ

- ແຜນຈັດສັນລະດັບເມືອງ (ກໍລະນີເຂດປ່າຜະລິດກວມເອົາຫຼາຍເມືອງ)
- ແຜນຈັດສັນເຂດຍ່ອຍ (ກໍລະນີເຂດປ່າຜະລິດຂອງເມືອງ ມີເນື້ອທີ່ໃຫ່ຍກ່ວາ 15 000 ເຮັກຕາ ຂຶ້ນໄປ).

8.2.2 ການວາງແຜນຈັດສັນເນື້ອທີ່ປ່າຜະລິດ

- ເຂດປ່າຜະລິດ ຕ້ອງໄດ້ຈັດແບ່ງ ເປັນເຂດຂຸດຄົ້ນປະຈຳປີ ຕາມຮອບວຽນການຂຸດຄົ້ນ ແລະ ຕ້ອງໄດ້ສະແດງໃຫ້ເຫັນໃນແຜນທີ່ການຈັດສັນປ່າຜະລິດ ແລະ ໃນພາກສະໜາມ.
- ຮອບວຽນການຂຸດຄົ້ນ ໃນເຂດຈັດສັນຍ່ອຍໜຶ່ງ ແມ່ນ 15 ປີ ສຳລັບເຂດທົ່ງພຽງ ແລະ 20 ປີ ສຳລັບເຂດພູດອຍ.
- ເຂດປ່າຜະລິດ ທີ່ນອນໃນເຂດສູງຊັນ ເກີນ 60%, ເຂດຍອດນ້ຳ, ເຂດລຽບຕາມແຄມແມ່ ນ້ຳ ເບື້ອງລະ 150 ແມັດ, ແຄມຫ້ວຍນ້ຳ ເບື້ອງລະ 50 ແມັດ, ລຽບຕາມແຄມທາງຫຼວງ ແລະ ທາງທ້ອງຖິ່ນ ເບື້ອງລະ 50 ແມັດ, ເຂດປະວັດສາດທາງດ້ານວັດທະນາທຳ, ເຂດທີ່ມີທິວທັດທຳມະຊາດສວຍງາມ ແລະ ເຂດທີ່ມີຄຸນຄ່າສູງ ທາງດ້ານການອະນຸລັກ ຊີວະນາໆພັນ ຈະຖືກຈັດແບ່ງໄວ້ເປັນເຂດ ປ່າປ້ອງກັນ ຫຼື ປ່າສະຫງວນ ແລະ ຫ້າມຂຸດຄົ້ນ ໂດຍເດັດຂາດ.
- ແຜນຈັດສັນປ່າຜະລິດ ຕ້ອງໄດ້ປັບປຸງຄືນໃໝ່ ພາຍຫຼັງສິ້ນສຸດແຕ່ລະຮອບວຽນການຂຸດຄົ້ນ.

8.2.3 ລະບົບການຂຸດຄົ້ນໄມ້

- ຕັດກ້ຽງ ສຳລັບເຂດທີ່ຈະມີການກໍ່ສ້າງພື້ນຖານໂຄງລ່າງ.
- ຕັດຍອນ ສຳລັບເຂດປ່າຜະລິດ.

8.2.4 ການວາງແຜນຂຸດຄົ້ນໄມ້ ໃນເຂດປ່າຜະລິດ

- ບໍລິມາດໄມ້ ທີ່ອະນຸຍາດຂຸດຄົ້ນຕໍ່ຄຸ້ມ ໃນຮອບວຽນທຳອິດ ບໍ່ໃຫ້ເກີນ 25% ຂອງບໍລິມາດໄມ້ຢືນຕົ້ນ ທີ່ມີໜ້າຕ້າງ 20 ຊມ ຂຶ້ນໄປ.
- ຄຸ້ມໃດໜຶ່ງ ຂອງປ່າຜະລິດ ຊຶ່ງມີບໍລິມາດໄມ້ ທີ່ສາມາດຂຸດຄົ້ນຕ່ຳກ່ວາ 1 ແມັດກ້ອນ/ເຮັກຕາ ແມ່ນບໍ່ອະນຸຍາດໃຫ້ຂຸດຄົ້ນ.
- ບໍລິມາດໄມ້ ທີ່ອະນຸຍາດໃຫ້ຂຸດຄົ້ນ ໃນຮອບວຽນຕໍ່ໄປ ແມ່ນເທົ່າກັບ ການເຕີບໂຕ ຂອງຕົ້ນໄມ້ຄູນໃຫ້ ຮອບວຽນການຂຸດຄົ້ນ.

8.3 ຫຼັກການລວມການສຳຫຼວດກ່ອນການຂຸດຄົ້ນ

8.3.1 ການສຳຫຼວດກ່ອນການຂຸດຄົ້ນໃນເຂດປ່າຜະລິດ

- ສຳຫຼວດ 1 ປີ ກ່ອນການຂຸດຄົ້ນ ສະເພາະຄຸ້ມ ທີ່ໄດ້ກຳນົດ ໃນແຜນຈັດສັນ.
- ສຳຫຼວດ 100% ທຸກຊະນິດພັນໄມ້ ທີ່ມີຂະໜາດ ວັດຮອບ ອະນຸຍາດຕັດປ້ຳ ທີ່ໄດ້ລະບຸໄວ້ ໃນຂໍ້ຕົກລົງ ຂອງກະຊວງກະສິກຳ ແລະ ປ່າໄມ້.
- ຂຶ້ນບັນຊີຊະນິດພັນໄມ້ ແລະ ຕີລາຄາຄຸນນະພາບ ຂອງລຳຕົ້ນ

- ກຳນົດເສັ້ນທາງລາກແກ່ໄມ້, ສະໜາມ I ແລະ ສະໜາມ II.
- ສ້າງແຜນທີ່ສະແດງ ຈຸດທີ່ຕັ້ງຂອງຕົ້ນໄມ້ ທີ່ໄດ້ຂຶ້ນບັນຊີ.
- ສ້າງແຜນການຂຸດຄົ້ນໄມ້.

8.3.2 ການສຳຫຼວດກ່ອນການຂຸດຄົ້ນໃນເຂດກໍ່ສ້າງພື້ນຖານໂຄ່ງລ່າງ

- ສຳຫຼວດຂຶ້ນບັນຊີໄມ້ 100% ທີ່ມີໜ້າຕ້າງ 10 ຊມ ຂຶ້ນໄປ.
- ສຳຫຼວດປະເມີນ ຫວາຍ, ໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ.

8.4 ຫຼັກການໃນການສຳຫຼວດໝາຍຕົ້ນຕັດ

- ໝາຍ ແລະ ຕີກາຕົ້ນໄມ້ ຕາມແຜນການຂຸດຄົ້ນ ທີ່ໄດ້ກຳນົດໄວ້.
- ສ້າງແຜນທີ່ຈຸດທີ່ຕັ້ງ ຂອງຕົ້ນໄມ້ທີ່ໄດ້ໝາຍ ແລະ ຕີກາຕົ້ນ.
- ກຳນົດທິດ ລົ້ມຂອງຕົ້ນໄມ້.

8.5 ຫຼັກການລວມ ການສຳຫຼວດຫຼັງການຂຸດຄົ້ນ

- ສຳຫຼວດພາຍໃນ 6 ເດືອນ ຫຼັງຈາກສຳເລັດການຂຸດຄົ້ນ ໂດຍການສຸ່ມຕົວຢ່າງ ຢ່າງໜ້ອຍ 5% ຂອງຈຳນວນຕົ້ນໄມ້ທີ່ຖືກຕັດ.
- ກວດກາ ການຈັດຕັ້ງປະຕິບັດການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ.
- ຕີລາຄາຜົນກະທົບຕໍ່ສິ່ງແວດລ້ອມ.
- ກຳນົດມາດຕະການແກ້ໄຂ.

ມາດຕາ 9: ການຮັບຮອງແຜນຈັດສັນປ່າຜະລິດ ແລະ ຜົນການສຳຫຼວດປະເພດຕ່າງໆ

- ລັດຖະບານ ເປັນຜູ້ຮັບຮອງ ຜົນການສຳຫຼວດ ຄວາມປົກຫຸ້ມປ່າໄມ້ ໃນຂອບເຂດທົ່ວປະເທດ.
- ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຮອງ ຜົນການສຳຫຼວດປ່າໄມ້ແຫ່ງຊາດ.
- ກົມປ່າໄມ້ ເປັນຜູ້ຮັບຮອງ ແຜນຈັດສັນປ່າຜະລິດ.
- ພະແນກກະສິກຳ ແລະ ປ່າໄມ້ແຂວງເປັນຜູ້ຮັບຮອງ ຜົນການສຳຫຼວດກ່ອນການຂຸດຄົ້ນ ແລະ ການສຳຫຼວດໝາຍຕົ້ນຕັດ.

## ໝວດທີ 3

## ໜ້າທີ່ ແລະ ຂອບເຂດສິດ ໃນການສຳຫຼວດປ່າໄມ້.

ມາດຕາ 10. ໜ້າທີ່ ແລະ ຂອບເຂດສິດ ຂອງກົມປ່າໄມ້

1. ສຳຫຼວດ ຄວາມປົກຫຸ້ມປ່າໄມ້.
2. ສຳຫຼວດປ່າໄມ້ແຫ່ງຊາດ.
3. ສຳຫຼວດຈັດແບ່ງປະເພດປ່າໄມ້ ແລະ ທີ່ດິນປ່າໄມ້.

4. ສຳຫຼວດປ່າສະຫງວນແຫ່ງຊາດ.
5. ສຳຫຼວດ ກຳນົດເຂດປ່າຜະລິດ.
6. ສຳຫຼວດຈັດສັນປ່າຜະລິດ.
7. ສຳຫຼວດຫຼັງການຂຸດຄົ້ນໄມ້.

ມາດຕາ 11. ໜ້າທີ່ ແລະ ຂອບເຂດສິດ ຂອງຂະແໜງປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ແລະ ເຂດພິເສດ

1. ສຳຫຼວດກ່ອນການຂຸດຄົ້ນ.
2. ສຳຫຼວດໝາຍຕົ້ນຕັດ.
3. ສຳຫຼວດໄມ້ ໃນເຂດກໍ່ສ້າງພື້ນຖານໂຄງລ່າງອື່ນໆ.
4. ເຂົ້າຮ່ວມການສຳຫຼວດ ທີ່ໄດ້ລະບຸໄວ້ ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ທີ່ຈັດຕັ້ງປະຕິບັດຢູ່ພາຍໃນແຂວງຂອງຕົນ.

ມາດຕາ 12. ຂໍ້ຫ້າມ

ບໍ່ອະນຸຍາດໃຫ້ ບຸກຄົນ ຫຼື ອົງການຈັດຕັ້ງທີ່ບໍ່ໄດ້ລະບຸໄວ້ໃນມາດຕາ10 ແລະ 11 ຂອງຂໍ້ຕົກລົງສະບັບນີ້ ດຳເນີນການສຳຫຼວດຊັບພະ ຍາກອນປ່າໄມ້. ໃນກໍລະນີຈຳເປັນ ຕ້ອງໄດ້ຮັບການອະນຸມັດ ຈາກກະຊວງກະສິກຳ ແລະ ປ່າໄມ້ ແຕ່ຕ້ອງຢູ່ພາຍໃຕ້ ການກວດກາ ແລະ ຢັ້ງຢືນທາງດ້ານວິຊາການ ຈາກກົມປ່າໄມ້.

## ໝວດທີ 4:
## ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 13. ນະໂຍບາຍ ຕໍ່ຜູ້ມີຜົນງານ

- ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການສຳຫຼວດ ຊັບພະຍາກອນປ່າໄມ້ ແລະ ເຮັດໃຫ້ ການຊົມໃຊ້ ຊັບພະຍາກອນປ່າໄມ້ ຖືກຕ້ອງຕາມຫຼັກວິຊາການ ແມ່ນຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕ່າງໆ ຕາມຄວາມເໝາະສົມ.
- ບຸກຄົນທີ່ໄດ້ປະກອບສ່ວນ ໃນການສຳຫຼວດ ຊັບພະຍາກອນປ່າໄມ້ ແລະ ສະກັດກັ້ນ ບັນດາການກະທຳ ທີ່ຝ່າຝືນ ຕໍ່ຂໍ້ຕົກລົງສະບັບນີ້ ໃນເມື່ອໄດ້ຮັບຜົນເສຍຫາຍ ທາງດ້ານຊັບສິນ ແລະ ຮ່າງກາຍ ຈະໄດ້ຮັບການຕອບແທນ ຕາມລະບຽບການ ສະຫວັດດີການ ສັງຄົມ ທີ່ລັດວາງອອກ.

ມາດຕາ 14. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ແລະ ການຈັດຕັ້ງທີ່ລະເມີດ ຕໍ່ຂໍ້ຕົກລົງສະບັບນີ້ ຕ້ອງຖືກປະຕິບັດວິໄນ ດ້ວຍ ການສຶກສາອົບຮົມ, ປັບໄໝ ແລະ ລົງໂທດທາງອາຍາ ຕາມລະບຽບ ກົດໝາຍ ທີ່ລັດໄດ້ກຳນົດໄວ້.

## ໝວດທີ 5
## ບົດບັນຍັດ ສຸດທ້າຍ

**ມາດຕາ 15. ການຈັດຕັ້ງປະຕິບັດ**

ກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນຫຼວງວຽງຈັນ, ເຂດພິເສດ, ທຸກພາກສ່ວນ ເສດຖະກິດ ລວມທັງ ບຸກຄົນ ແລະ ການຈັດຕັ້ງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້.

**ມາດຕາ 16. ຜົນສັກສິດ**

ຂໍ້ຕົກລົງ ສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ. ທຸກຂໍ້ກຳນົດ ແລະ ລະບຽບການອື່ນໆທີ່ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ປະກາດໃຊ້ ໃນເມື່ອກ່ອນ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ແມ່ນຖືກຍົກເລີກ.

ລັດຖະມົນຕີ ວ່າການ ກະຊວງ ກະສິກຳ ແລະ ປ່າໄມ້

ສິຕາເຮັ່ງ ຣາຊະພົນ